ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
ການຮ່ວມມື ລາວ-ເຢຍຣະມັນ

# ຂ່າວໃບລານ

ປີທີ VIII ສະບັບທີ 18* ທັນວາ 2000

PRESERVATION OF LAO MANUSCRIPTS PROGRAMME
LAO-GERMAN COOPERATION. NEWS BULLETIN * December 2000




ກອງປະຊຸມວິທີວິທະຍາການປົກປັກຮັກສາ
ໜັງສືໃບລານ ຢູ່ ແຂວງ ຊຽງຂວາງ

ກອງປະຊຸມວິທີວິທະຍາການປົກປັກຮັກສາ
ໜັງສືໃບລານ ຢູ່ ແຂວງ ຫົວພັນ



# ກອງປະຊຸມ ຢູ່ແຂວງ ຊຽງຂວາງ



*ທ່ານນາງ ບຸນເພັງ ມູນໂພໄຊ ກຳມະການສູນກາງພັກ ເລຂາພັກແຂວງ*

ໃນວັນທີ 22/4/98 ຢູ່ທີ່ດິນແດນສະຫມໍລະພູມນັກຮົບວິລະຊົນແຂວງຊຽງຂວາງໄດ້ມີພິທີເປີດກອງປະຊຸມວິຊາການປົກປັກຮັກສາຫນັງສືຜູກໃບລານຄັ້ງປະຫວັດສາດຂຶ້ນຢ່າງເປັນທາງການ ໂດຍມີຜູ້ແທນຈາກເມືອງຕ່າງໆ ແລະ ຜະແນກການອ້ອມຂ້າງແຂວງເຂົ້າຮ່ວມຈຳນວນ 62 ຄົນ ໃນພິທີດັ່ງກ່າວ ທ່ານນາງ ບຸນເພັງ ມູນໂພໄຊ ກຳມະການສູນກາງພັກ ເລຂາພັກແຂວງ ເຈົ້າແຂວງໆຊຽງຂວາງ ປະທານກອງປະຊຸມໄດ້ກ່າວເປີດພິທີ ບາງຕອນທ່ານກ່າວວ່າ: "ຊຽງຂວາງເປັນແຂວງນຶ່ງທີ່ຖືກສົງຄາມທຳລາຍຢ່າງຫນັກຫນ່ວງ ໃນປາງສົງຄາມ ຊັບສິນເງິນຄຳທຸກຢ່າງລ້ວນແຕ່ຖືກທຳລາຍ ອາດເວົ້າໄດ້ວ່າປະຊາຊົນຊາວຊຽງຂວາງທີ່ເຫລືອຕາຍຫລັງສົງຄາມແມ່ນເປັນຄົນສິ້ນເນື້ອປະດາຕົວ ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ກ້າວເຂົ້າສູ່ການສ້າງບ້ານແປງເມືອງຄືນໃຫມ່ ໂດຍເລີ່ມຈາກສອງຝາມືເປົ່າທັງສຽງ ຕໍ່ຄວາມອັນຕະລາຍຂອງເສດເຫລືອສົງຄາມ ແຕ່ກ່ອນສົງຄາມທຳລາຍຫນັງສືຜູກໃບລານຢູ່ແຂວງຊຽງຂວາງກໍ່ມີຫລວງຫລາຍ ຢູ່ຕາມວັດວາອາຮາມຊຶ່ງຄຸ້ມຄອງໂດຍເຈົ້າອາວາດ ແລະ ມີຢູ່ນຳຢ້າວເຮືອນ ເປັນສ່ວນຂອງບຸກຄົນທີ່ປົກປັກຮັກສາໄວ້ກໍ່ມີ.

ແຕ່ພາຍຫລັງຖືກສົງຄາມທຳລາຍສິ່ງດັ່ງກ່າວແມ່ນໄດ້ຖືກເສັຽຫາຍໄປຈົນນັບບໍ່ຖ້ວນ. ເຖິງຢ່າງໃດກໍ່ຕາມ ຍ້ອນຈິດໃຈກະຫນອມຮັກມູນມໍລະດົກວັດທະນະທຳອັນເກົ່າແກ່ດັ້ງເດີມຂອງຕົນນັ້ນ ທາງເຈົ້າອະທິການວັດ, ອົງການພຸດທະສາສນາ, ພຸທະສາສະນິກະຊົນ ຜູ້ທີ່ຜໍມີເງື່ອນໄຂເອົາໄປມ້ຽນມັດຊຸກເຊື່ອງຢູ່ໃນຖ້ຳໃນຜາ ຫລື ພະຍາຍາມຮັກສາຕິດຕົວໃນເວລາຫລົກໄພສົງຄາມ ຈຶ່ງມີຈຳນວນນຶ່ງທີ່ເຫລືອຄ້າງຕົກທອດມາເຖິງປັດຈຸບັນ. ຫນັງສືຜູກໃບລານແມ່ນມໍລະດົກຂອງລາວແມ່ນເອກະລັກທີ່ໃຫ້ກຳເນີດດ້ານພາສາປາກເວົ້າເປັນພື້ນຖານໃຫ້ແກ່ການເສີມສ້າງຕົວຫນັງສືລາວໄດ້ສົມບູນແບບ, ເປັນເອກະສານໂຄສະນາສຶກສາອົບຮົມຄົນ ແລະ ຊີວິດສັງຄົມ, ເຮັດໃຫ້ມີພູມປັນຍາ ແລະ ຄວາມສາມາດຕໍ່ເນື່ອງກັນມາຫລາຍເຊັ່ນຄົນແລ້ວ.

ດ້ວຍເຫດນີ້ພັກ - ລັດຖະບານພວກເຮົາຈຶ່ງຖືເປັນສິ່ງສຳຄັນມີນະໂຍບາຍເພື່ອປົກປັກຮັກສາມູນເຊື້ອວັດທະນະທຳອັນດີງາມໃຫ້ຍືນຍົງຕະຫລອດໄປ. ສະນັ້ນກອງປະຊຸມຄັ້ງນີ້ກໍ່ ແມ່ນວິທີນຶ່ງທີ່ຈັດຕັ້ງປະຕິບັດແນວທາງດັ່ງກ່າວໃຫ້ປະກົດຜົນເປັນຈິງ. ອີກເທື່ອນຶ່ງຂ້າພະເຈົ້າ ຂໍຕາງຫນ້າໃຫ້ຄະນະນຳຂອງແຂວງຮຽກຮ້ອງມາຍັງບັນດາທ່ານຜູ້ແທນທັງຫລາຍ ສຸມຈິດໃຈເຂົ້າໃນການຄົ້ນຄວ້າສົນທະນາໃຫ້ເລິກເຊິ່ງ ເພື່ອກຳໄດ້ຈຸດປະສົງຄາດຫມາຍຂອງກອງປະຊຸມຄັ້ງນີ້ວ່າ ຢາກໃຫ້ໄດ້ຫຍັງແດ່? ແລ້ວພ້ອມກັນນຳເອົາໄປຈັດຕັ້ງປະຕິບັດຢູ່ກົມກອງທ້ອງຖິ່ນຂອງຕົນໃຫ້ປະກົດຜົນເປັນຈິງ.

ກອງປະຊຸມໄດ້ດຳເນີນຮອດວັນທີ 24/4/98 ຈຶ່ງໄດ້ອັດລົງຢ່າງຈົບງາມ ດ້ວຍຄວາມປິຕິຊົມຊື່ນຂອງເຖົ້າແກ່ແນວໂຮມ ເພິ່ນຈຶ່ງໄດ້ພ້ອມກັນຈັດພາບາສີສູ່ຂວັນໃຫ້ບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມເທື່ອນີ້ອີກດ້ວຍ.

**ຄຳເຫັນຂອງ ທ່ານ ກອງມີ ວິພົມມະວົງສາ**
**ຫົວໜ້າພະແນກຖະແຫລງຂ່າວ - ວັດທະນະທຳ ແຂວງຊຽງຂວາງ**
**ກ່າວຢູ່ກອງປະຊຸມໃບລານຄັ້ງວັນທີ 22 - 24/4/98**





*ປັນຍາກາດໃນກອງປະຊຸມ*

**ຊຽງຂວາງ** ເວົ້າເຖິງດ້ານປະຫວັດສາດກໍ່ແມ່ນນຶ່ງໃນຈຳນວນ 12 ແຂວງ ກ່ອນສົງ ຄາມມີຄວາມຈະເລີນສີວິໄລທາງດ້ານວັດທະນະທຳ ເປັນມໍລະດົກອັນລ້ຳຄ່າຂອງ ແຂວງຊຽງຂວາງພວກຂ້າພະເຈົ້າ.

ແຕ່ເປັນໜ້າເວດທະນາ ສົງຄາມຮຸກຮານຂອງພວກລ່າເມືອງຂຶ້ນທັງເກົ່າແລະໃຫມ່ ໄດ້ປະປ່ອຍຮ່ອງຮອຍປະຫວັດສາດອັນຮຸ່ງເຮືອງດັ່ງກ່າວໄວ້ ໃຫ້ແກ່ອົງຄະນະຝັກ, ອຳນາດການປົກຄອງທຸກຂັ້ນຕລອດຮອດປະຊາຊົນບັນດາເຜົ່າຍັງເຫລືອພຽງແຕ່ເກົ່າກ່ານ. ວັດວາອາຮາມສະຖານບູຮານ, ມິ່ງເມືອງຕ່າງໆ ກໍ່ຖືກທຳລາຍກ້ຽງ. ຮ່ອງຮອຍດັ່ງກ່າວມັນໄດ້ ຮຽກຮ້ອງເຖິງການນຳທຸກຂັ້ນ ປະຊາຊົນທຸກຄົນຕ້ອງໄດ້ຮຳບາດແຜສົງຄາມດ້ວຍສອງຝາມືເປົ່າ.ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍມາຮອດມື້ນີ້ ທົ່ວແຂວງຊຽງຂວາງໄດ້ສ້າງວັດຄືນໃຫມ່ 243 ວັດ. ໃນນັ້ນວັດທີ່ບໍ່ມີພະສົງ 50 ວັດ. ພະສົງທັງຫມົດມີ 490 ກວ່າອົງ. ພະພຸດທະຮູບ 266 ອົງ. ປັດຈຸບັນນີ້ ພວກເຮົາກໍ່ໄດ້ສືບຕໍ່ຄົ້ນຄວ້າເກັບກຳສະຖິຕິ, ພະພຸດທະຮູບ, ຄຳພີໜັງສືໃບລານປຶ້ມເລື່ອງຕ່າງໆ ເສດເຫລືອຈາກສົງຄາມທີ່ຊາວພຸດທັງຫລາຍນຳເອົາໄປເຊື່ອງໄວ້, ຝັງໄວ້ຕາມສະຖານທີ່ຕ່າງກັນເພື່ອປົກປັກຮັກສາໃຫ້ຄຽງຄູ່ກັບຊາວເມືອງພວນພວກເຮົາ.

ທ່ານຜູ້ແທນທີ່ເຄົາລົບ,

ຂ້າພະເຈົ້າ ສຸດທີ່ກະຕຸ້ນໃຈຕໍ່ບັນຫາການຂຸດຄົ້ນ, ການອະນຸລັກຮັກສາ ແລະ ການຟື້ນຟູໜັງສືຜູກໃບລານ, ທີ່ບັນພະບູລຸດໄດ້ສຸມພູມປັນຍາຂຽນອອກມາເຜີຍແຜ່ໃຫ້ຄົນຮຸ່ນຫລັງໄດ້ສືບທອດ. ສິ່ງທີ່ຍັງເຫລືອ ມັນແມ່ນຂໍ້ມູນອັນປະເສີດເລີດລ້ຳ ທີ່ພວກເຮົາຈຳຕ້ອງໄດ້ຈັດຕັ້ງຜັນຂະຫຍາຍມໍລະດົກດັ່ງກ່າວອອກໃຫ້ຫລາຍເພື່ອເຜີຍແຜ່ໂຄສະນາ.

☞

## ເຊີນອ່ານ


- ກອງປະຊຸມ ແຂວງຊຽງຂວາງ 2
- ບົດຄຳເຫັນທ່ານກອງມີ.... 3
- ສູ່ແດນເໜືອສຸດ.... 5
- ນິຕິທັມ.... 6
- ຊຽງຮ່ອນ-ຫົງສາ... 7
- ໄຂສຳນວນພາສາລາວ..... 9
- ຊຽງຮ່ອນ-ຊຽງລົມ..... 10
- ກອງປະຊຸມແຂວງຫົວພັນ.. 12
- ຄຳເຫັນທ່ານແພງສີ.... 14
- ກອນຫລານສອນຍ່າ.. 16
- ການສຳຫລວດ..... 17
- ກອນປູ່ສອນຫລານ.... 19







**ຄຳອະທິບາຍຮູບ**

| | |
|---|---|
| 1 | 2 |
| 3 | |

*1- ບັນຍາກາດກອງປະຊຸມ*
*2- ບາສີສູ່ຂວັນຫລັງຈາກປິດກອງປະຊຸມ*
*3- ຜູ້ແທນຊົມເຄື່ອງວາງສະແດງ*

ເທສະນາໄປຢ່າງກວ້າງຂວາງ, ທັງຫມົດດັ່ງກ່າວນັ້ນແມ່ນຄວາມຮັບຜິດຊອບຄວາມຫ່ວງໄຍທີ່ພວກເຮົາເສີມສ້າງໃຫ້ຄົນຮຸ່ນໃໝ່ໄດ້ມີບ່ອນສືບທອດອ້າງອີງ ມີບ່ອນຖອດຖອນບົດຮຽນ ແລະ ເສີມຂະຫຍາຍຄວາມຮັບຮູ້ທາງວັດທະນະທຳຂອງຊາດ.

ໂຄງການໜັງສືຜູກໃບລານລາວ ໂດຍໄດ້ຮັບການຮ່ວມມືຈາກລັດຖະບານ ສ.ສ ເຢຍຣະມັນ ແມ່ນເປັນການສ້າງໂອກາດໃຫ້ພວກເຮົາໄດ້ເຂົ້າຮ່ວມມືນຳພວກເພິ່ນ, ຍາດແຍ່ງເອົາທິດສະດີ ແລະ ທຶນຮອນວິຊາການດ້ານຕ່າງໆເພື່ອເປັນບົດຮຽນ. ພວກຂ້າພະເຈົ້າຜູ້ຮັບຜິດຊອບພາລະບົດບາດເປັນເສນາທິການຄຸ້ມຄອງມະຫາພາກໃນວຽກງານນີ້ ຂໍສະແດງຄວາມຂອບອົກຂອບໃຈມາຍັງລັດຖະບານ ສ.ສ ເຢຍຣະມັນ, ກະຊວງຖະແຫລງຂ່າວ-ວັດທະນະທຳ ແລະ ໂຄງການປົກປັກຮັກສາໜັງສືໃບລານ ທີ່ໄດ້ຈັດກອງປະຊຸມນີ້ຂຶ້ນຢູ່ແຂວງຊຽງຂວາງເປັນຄັ້ງທຳອິດ, ພວກຂ້າພະເຈົ້າຈະຢູ່ຄຽງຂ້າງ ແລະ ປະສານສົມທົບໃນວຽກງານນີ້ຕລອດໄປ, ຂໍຝາກຄວາມຫວັງ ແລະ ສະເໜີມາຍັງບັນດາທ່ານຈົ່ງໄດ້ສືບຕໍ່ໃຫ້ການຊ່ວຍເຫລືອວຽກງານນີ້ກັບພວກຂ້າພະເຈົ້າໃນຂັ້ນຕໍ່ໄປ.

## ຄຳຜະຫຍາພາສິດ

*ຈາກປຶ້ມສຸພາສິດບູຮານ*
*ຮຽບຮຽງໂດຍ : ມະຫາສີລາ ວີຣະວົງສ໌*

- *ຊາດທີ່ແບວບານບົ້ງ*
  *ເຮັດໃຫ້ເປັນດັ່ງມ້ອນ*
  *ແປບໃດກາຊິຕອດກິນແລ້ວ*
  *ໃຍຫຸ້ມທໍ່ໃດ ເວົ້ເປີ*

- *ຊື່ວ່າ ຈັນໃສແຈ້ງ*
  *ດາວຢູ່ລ້ອມ*
  *ດວງດຽວບໍ່ມີຊື່ນ*
  *ຫລາຍຊັ້ນ ກໍ່ຈຶ່ງເຮືອງ*

- *ໃຜຜູ້ອາສາລ້ຽງ*
  *ຢ້ານແຕ່ດັບບໍ່ມື້ວ*
  *ງູສາໄວ້ດອມໄກ່*
  *ເຂັບຮ້າຍເຂົ້າຮ່ວມເຮືອນ*

- *ຫນອງບໍ່ມີຂອບຂວ້າງ*
  *ມີວັງຄັນບໍ່ມີເງືອກເຝົ້າ*
  *ພານແພເຂົ້າຊິຫວ່ານລົງແລ້ວ*
  *ຄົນໃບ້ກໍ່ບໍ່ຢາ .*

## ສູ່ແດນເຫນືອສຸດ ຂອງແຂວງ ໄຊຍະບູລີ

ໂດຍ : ພ. ທິງສັກສິດ

ວັນທີ 23/7/98 ຄະນະໜ່ວຍສຳຫລວດພວກເຮົາໄດ້ອອກເດີນທາງໄປຍັງແຂວງຫລວງພະບາງ ບ່ອນທີ່ນັດພົບກັບວັດທະນະທຳແຂວງໄຊຍະບູລີ. ພໍພວກເຮົາໄປເຖິງຫລວງພະບາງ ກໍ່ໄດ້ພົບກັບ ທ່ານ ສົມຫວັງ ວັດທະນະທຳແຂວງໄຊຍະບູລີ, ຊຶ່ງທ່ານກໍ່ເດີນທາງມາໃນວັນດຽວກັນ.

ຄະນະພວກເຮົາໄດ້ອອກຈາກຫລວງພະບາງໄປເມືອງຄອບແຂວງໄຊຍະບູລີ ໂດຍຂີ່ເຮືອໄວໄປຫາປາກແບ່ງ ໃຊ້ເວລາເດີນທາງປະມານ 3 ຊົ່ວໂມງ ຈາກນັ້ນໄດ້ສືບຕໍ່ເດີນທາງຈາກປາກແບ່ງ ໄປຫາບ້ານປາກຄອບ ໃຊ້ເວລາເດີນທາງປະມານ 1 ຊົ່ວໂມງ. ໃນເວລາ 15 ໂມງ 30 ຄະນະຫນ່ວຍສຳຫລວດພວກເຮົາຈຶ່ງໄດ້ອອກເດີນທາງມຸ່ງຫນ້າເຂົ້າສູ່ເມືອງຄອບ ໂດຍທາງລົດ ໃຊ້ເວລາປະມານ 2 ຊົ່ວໂມງຕໍ່ເສັ້ນທາງ 21 ກິໂລແມັດ, ຈຶ່ງເຖິງສຳນັກເມືອງຄອບແຂວງໄຊຍະບູລີ. ໃນຕອນກາງຄືນຂອງວັນດຽວກັນ ຄະນະພວກເຮົາຍັງໄດ້ພະຍາຍາມຂໍເວລາເພື່ອພົບປະກັບທ່ານບຸນມາກ ຫົວຫນ້າວັດທະນະທຳເມືອງຄອບ ພ້ອມດ້ວຍຄະນະຫລັງຈາກນັ້ນ ພວກເຮົາກໍ່ໄດ້ສະເຫນີຈຸດປະສົງລາຍລະອຽດ ແລະ ປຶກສາຫາລືກ່ຽວກັບແຜນງານ ທີ່ຈະລົງສຳຫລວດຕົວຈິງໃນແຕ່ລະຈຸດ, ແຕ່ລະບ້ານ. ຕົກມາໃນວັນທີ 25/07/98 ທາງວັດທະນະທຳເມືອງ ຈຶ່ງໄດ້ໃຫ້ຂໍ້ມູນແຕ່ລະຈຸດ ທີ່ຈະລົງເຄື່ອນໄຫວລວມທັງຫມົດມີ 5 ຈຸດ.

ໃນວັນທີ 26/07/98 ຄະນະພວກເຮົາໄດ້ລົງເຄື່ອນໄຫວສຳຫລວດ ຢູ່ຈຸດທີ 1 ມີ 3 ບ້ານຄື : ບ້ານສະຖານ, ບ້ານພ້າວ ແລະ ບ້ານຖ້ຳ ພວກເຮົາໄດ້ເປີດພິທີຢູ່ບ້ານ ສະຖານ ໂດຍມີທ່ານ ວັນແສງ ຮອງເຈົ້າເມືອງ, ທ່ານ ຫນານປັນ ແນວໂຮມເມືອງ ພ້ອມດ້ວຍເຖົ້າແກ່ທັງ 3 ບ້ານ ເຂົ້າຮ່ວມ. ຈາກ ນັ້ນ ກໍ່ເຄື່ອນຍ້າຍໄປຈຸດທີ 2 ແລະ 3.

ແຕ່ຫນ້າເສຍດາຍ ຍັງຢູ່ 2 ຈຸດບໍ່ໄດ້ສຳຫລວດ ຍ້ອນວ່າເສັ້ນທາງທຸລະກັນດານ. ການສຳຫລວດໃນເທື່ອນີ້ ມີໃບລານທັງຫມົດ 3.838 ຜູກ ແລະ ພັບສາ 18 ເຫລັ້ມ ໃນຈຳນວນ 7 ຫົວວັດ.

ເມືອງຄອບ ເປັນເມືອງນຶ່ງທີ່ຫ່າງໄກສອກຫລີກທຸລະກັນດານທາງດ້ານຄົມມະນາຄົມຂົນສົ່ງ. ເມືອງຄອບຕັ້ງຢູ່



ຫໍບູຊາເຈົ້າພະພຸດທະຮູບຢູ່ແຂວງໄຊຍະ



ການສຳຫລວດຢູ່ແຂວງໄຊຍະ

ເຫນືອສຸດຂອງແຂວງໄຊຍະບູລີ ມີຊາຍແດນຕິດກັບ ເມືອງຊຽງຄຳ ແຂວງພະເຢົາ ປະເທດໄທ ປະກອບມີຫລາຍຊົນຊາດຊົນເຜົ່າ. ຊົນເຜົ່າລື້ ແລະ ເຜົ່າຍວນກວມ 90% ຂອງພົນລະເມືອງ. ຊົນເຜົ່າລື້ ແລະ ຍວນ ນັບຖືສາດສະໜາພຸດມາຫລາຍສະຕະວັດ. ມີຮີດຄອງປະເພນີອັນດີງາມມາແຕ່ປູ່ຍ່າຕາຍາຍ ຫລື ບັນພະບູລຸດຂອງເຂົາເຈົ້າ. ອາຊີບຕົ້ນຕໍແມ່ນເຮັດນາ ແລະ ໄຮ່, ສຳຮອງລ້ຽງສັດປູກຝັງ. ເປັນເມືອງທີ່ອຸດົມສົມບູນໄປດ້ວຍອູ່ເຂົ້າອູ່ນ້ຳ ແລະ ວັງປາ.

ໃນເມືອງດັ່ງກ່າວ ມີເອກະສານໃບລານຫລາຍສົມຄວນ. ຍ້ອນວ່າ ໃບລານໄດ້ຖືກຮັກສາໄວ້ເປັນຢ່າງດີ, ຜ່ານການສຳຫລວດມາມີວັດບ້ານມ່ວງໄດ້ຖືກໄຟໄໝ້

ອ່ານຕໍ່ໜ້າ 20

# ນິຕິທັມຄຳກອນ

(ຕໍ່ຈາກສະບັບທີ 14)

(ຈາກໃບລານ ວັດໄຄມຊີນ ຫລວງພະບາງ)

*ໂດຍ : ບຸນເລີດ ທັມມະຈັກ*

*ອະນຸສິນ (ສືບຕໍ່) ຊີ້ທາງຊີ້ເຫດ*
*ສາມປະການຈື່ຈຳເອົາໄວ້*
*ສອງໃຈທານກຳລັງໂຕນ້ອຍ*
*ແກ່ຄົນແຮງກວ່າຕົນຄວນຢ້ານ*
*ມັກຂືນຄຳຖຽງຄົນຮູ້ມາກ*
*ສາມປະການດັ່ງດຽວເພີ່ງຮູ້*
*ເຂົາບໍ່ເຕືອນເຊີນຕົນຂຶ້ນບ້ານ*
*ເຂົາບໍ່ຖາມອວດຕາຍແຕ່ເວົ້າ*
*ຄົນໂມໂຫທານໂຕຄືບ້າ*
*ຊາຍມີເຄົາໜວດຄາງແຄມປາກ*
*ຢ່າຖະຫວີນພົບຄົນປາກກ້ຽງ*
*ຜູ້ສລຽວຣິ່ນຕອງຄຳປຣາດ*
*ສຽງເປັນມູນບອກທາງປະເວດ*
*ບອກສອງຂາຮັກກັບໄພຍາດ*
*ບອກອາຫານຂອງກິນບໍ່ໄຮ້*
*ພະອາຈານຍົກຄວາມມາປຽບ*
*ມີຫລວງຫລາຍໃນທັມມະເທດ*
*ກຳໃຫ້ຜົນຈົບທາຍທຸກຍາກ*
*ເວທະນາເຫລືອທົນຮ້ອງໄຫ້*
*ກຳ ແລະ ເວນໂຕທຳເພີ່ນຄຽດ*
*ຕິດຕາມພຽນຫາຜົນບໍ່ໄດ້*

*ອຸບປະເທດຄົນໃບ້ຄົນພານ*
*ບື່ງຂີ້ໄຮ້ຫລົງໂລບກາມາ*
*ຢ່າຄຽດຄ້ອຍຖົບຢ່າສຽງແຂງ*
*ສາມຂີ້ຄ້ານຮຽນຫນ້ອຍບໍ່ຈຳ*
*ດູພາກພື້ນຄົນຖ່ອຍເລວຊາມ*
*ບື່ງຊູ່ລູ້ຫຽວຂື້ນຕາມເຮືອນ*
*ສອງຫນ້າດ້ານອວດຮູ້ອວດຖາມ*
*ຂໍ້ສາມເວົ້າຍໍ້ຍ້ອງແຕ່ໂຕ*
*ເລື່ອງຖ່ອຍຊ້າຟັງແລ້ວຈື່ເອົາ*
*ແມ່ນທາຍາກໃນພື້ນແຜ່ນດິນ*
*ໃຫ້ຫລີກເວັ້ນບອນລີ້ຜູ້ດຽວ*
*ມາຣະຍາດບອກຊື່ຕະກຸນ*
*ເດີນປະເທດເຄີຍຄຸ້ນແອ່ວຫາ*
*ເບື້ອອ່ອນອາດເຕັມອ້ວນບໍ່ຜອມ*
*ຈຳເອົາໄວ້ທາງຮ່ວມບັນດິດ*
*ມາທຽບໄວ້ນາຣົກນາຈີ (ອະເວຈີ)*
*ຊີ້ໃນເຂດຄົນຍາກຄົນຈົນ*
*ແສນລຳບາກນາຣົກຕອງຕາ*
*ທ່ານປຽບໄວ້ນາຣົກຕາເຫັນ*
*ເພີ່ນບັງບຽດຍົກໂທດຕິຕຽນ*
*ກຳສ້າງໄວ້ນາຣົກເປັນເຮືອນ*

( ອ່ານຕໍ່ສະບັບໜ້າ

# ຊຽງຮ່ອນ-ຫົງສາ ຄວາມເປັນມາຂອງເມືອງ

ໂດຍ : ທໍາມະຈັກ

* ເມືອງຊຽງຮ່ອນທີ່ພວກເຮົາເຄີຍຮູ້ຕາມຄໍາກ່າວຂານບານມາວ່າ ຊຽງຮ່ອນ-ຫົງສາ ແຕ່ກ່ອນເປັນພຽງເຂດຕາແສງນຶ່ງຂອງແຂວງອຸດົມໄຊເອີ້ນວ່າ: ຕາແສງຊຽງຮ່ອນ-ຊຽງລົມ ປັດຈຸບັນທາງການຈັດຕັ້ງກໍ່ຄືສູນກາງໄດ້ແບ່ງ 4 ຕົວເມືອງພາກເຫນືອຂອງເຂດຟາກນໍ້າຂອງທາງຝັ່ງຂວາ ເປັນເຂດພິເສດ ຊຽງຮ່ອນ-ຫົງສາ ເຊິ່ງປະກອບມີເມືອງຫົງສາ, ເມືອງເງິນ, ເມືອງຊຽງຮ່ອນ ແລະ ເມືອງຄອບ (ແຂວງໄຊຍະບູລີ). ເປັນເມືອງທີ່ຕິດຈອດກັບທາງພາກເໜືອຂອງປະເທດໄທເກືອງ 4 ຈັງຫວັດມີ: ພະເຢົາ, ນ່ານ, ອຸດຕະຣະດິດ ແລະ ແພ່.

* ເຂດຊຽງຮ່ອນ-ຫົງສາ ມີເມືອງຊຽງຮ່ອນເປັນໃຈກາງ ເພາະເປັນເມືອງເກົ່າແກ່ ແລະ ເປັນເມືອງທີ່ຕັ້ງຢູ່ລະຫວ່າງກາງຂອງເມືອງທັງສາມທີ່ກ່າວມາມາແລ້ວ. ບັນດາປະຊາກອນໃນເຂດ 4 ເມືອງ ມີເກືອງ 5 ແສນກວ່າ ແລະ ມີທີ່ນາເຂດກະສິກໍາພໍປະມານ, ບັນດາຜົນລະເມືອງສ່ວນຫລາຍ ແມ່ນເຜົ່າລາວລຸ່ມ, ລາວລື້, ລາວຍວນ ແລະ ລາວສູງ ລາວເທິງປະປົນກັນ ຕາມເຂດພູຜາທີ່ສູງຊັນ, ຊົນເຜົ່າເຫລົ່ານີ້ ມີການຕັ້ງບ້ານເຮືອນຕາມຫຸບຫ້ວຍ, ຈ້າຍພູ ແລະ ສາຍນໍ້າຕ່າງໆ ແລ້ວໃສ່ຊື່ຫມູ່ບ້ານໄປຕາມທໍາມະຊາດເປັນນິມິດຫມາຍອີງຕາມພູມສາດ ແລະ ສາຍນໍ້າເຊັ່ນ: ນໍ້າມ້າວ, ນໍ້າຄອບ, ນໍ້າເປັດ, ນໍ້າງື່ມເປັນຕົ້ນ. ຊີວິດການເປັນຢູ່ສ່ວນຫລາຍແມ່ນອາໄສທໍາມະຊາດ ຂາດການຕິດຕໍ່ກັບພາຍນອກມານານກວ່າ 20 ປີແລ້ວ.

ປັດຈຸບັນການພັດທະນາຂອງພັກ-ລັດຖະບານ ສປປ. ລາວ ໄດ້ປັບປຸງເສັ້ນທາງເຊື່ອມໄປມາຫາສູ່ກັນໄດ້ໃນຍາມແລ້ງ ແລະ ຫລັງລະດູຝົນໂດຍເສັ້ນທາງທະລຸໂລ່ງແຕ່ໄຊຍະບູລີຫາເມືອງຫົງສາ, ເມືອງເງິນ, ຊຽງຮ່ອນ ແລະ ເມືອງຄອບ ໄດ້ບາງລະດູເທົ່ານັ້ນ, ແຕ່ພວກເຮົາກໍ່ເຫັນໄດ້ວ່າ



ພະທາດ ຢູ່ວັດ ສຸວັນນະບົວຄໍາ , ບ້ານສ້າ
ມີລັກສະນະເປັນເອກະລັກຂອງເຜົ່າລື້



ຫໍໄຕເສົາດຽວ,ຢູ່ວັດບ້ານຊົງ ເມືອງຊຽງຮ່ອນ
ແຂວງໄຊຍະບູລີ



ກຸຕິວິຫານວັດບ້ານສ້ຳ,
ທີ່ມູງດ້ວຍໄມ້ແປ້ນມາແຕ່ບູຮານ



ຍາພໍ່ເງິນເຈົ້າອະທິການວັດ,ບ້ານດອນເຟືອງ,
ຊຽງຮ່ອນ ອາຍຸ 83 ປີ ຜູ້ຍັງຮັກຕຳລາໃບລານ ແລະ ຄຳພີພັບສາ

ເສັ້ນທາງຕາມລຳແມ່ນ້ຳຂອງຈາກໄຊຍະບູລີ, ຫລວງພະບາງຫາທ່າສວ່າງ, ປາກແບ່ງ ແລະ ປາກທາກໍ່ເປັນອີກທາງນຶ່ງທີ່ພາໃຫ້ນັກທ່ອງທ່ຽວໄດ້ບຸກບືນໄປຮອດເຂດພິເສດນີ້ໄດ້.

ພໍມາຮອດຊຽງຮ່ອນຈະເຮັດໃຫ້ຜູ້ເດີນທາງທັນໃຈໂລ່ງ ແລະ ມີຈິດໃຈສົດຊື່ນຂຶ້ນ ຄືກັບວ່າເຮົາອົດກັ້ນແລະຫາຍໃຈນ້ອຍໃຈໃຫຍ່ມາຕລອດທາງ ເມື່ອມາພົບທົ່ງນາທີ່ກ້ວາງສຸດສາຍຕາ ບໍ່ວ່າລະດູຝົນ ຫລື ລະດູແລ້ງກໍຄືນາແຊງຈະເຫັນທົ່ງນາເມືອງຊຽງຮ່ອນຂຽວຊະອຸ່ມດ້ວຍຕົ້ນເຂົ້າ ແລະ ພືດພັນທັນຍາຫານ ສວນກ້ວຍ, ສວນອ້ອຍ, ຫມາກມີ້, ມ່ວງ ແລະ ຕົ້ນພ້າວ, ຕົ້ນຕານ ລຽງລາຍໄປຕາມສາຍທາງ, ສິ່ງທີ່ຄວນເອົາໃຈໃສ່ກໍ່ຄືຊາວບ້ານໃນເຂດນີ້ແມ່ນຊົນເຜົ່າລື້ ບຸງຖືແບບສະບັບຂອງລື້ສິບສອງປັນນາ ຫລື ເມືອງສິງແຂວງຫລວງນ້ຳທາ, ຜ່ານຈາກບ້ານພື້ນຖານເດີມເຊັ່ນ : ບ້ານຄ້ຳ, ບ້ານຂົ່ງ ແລະ ບ້ານໃຫມ່ໂນນສົມບູນຈຶ່ງຈະໄປເຖິງເຂດເທດສະບານເມືອງຊຽງຮ່ອນກໍ່ຄືບ້ານໃຫມ່ ບ້ານທາດ ບ້ານດອນຕັນ ຈຸດສຳຄັນຂອງຊຽງຮ່ອນແຕ່ກ່ອນເປັນພຽງຕາແສງຊຽງຮ່ອນ-ຊຽງລົມ ແຕ່ດຽວນີ້ການສ້າງເມືອງຈຶ່ງໄດ້ຂະຫຍາຍອອກ ຊຶ່ງເປັນໂນນດິນທີ່ຈົບງາມ ແລະ ມີວາງເສັ້ນທາງ ແລະ ຫ້ອງການປົກຄອງເມືອງ, ການເງິນ, ໄປສະນີ ແລະ ໂຮງຫມໍເມືອງ ເຮັດໃຫ້ພູດິນຫນ່ວຍນັ້ນກາຍເປັນເຂດເມືອງໃຫມ່ຂອງຕົວເມືອງຊຽງຮ່ອນ ໄກຈາກບ້ານເດີມປະມານ 1 ກິໂລແມັດເທົ່ານັ້ນ.

ຈຸດລວມຂອງເມືອງຊຽງຮ່ອນຕາມທີ່ ທ່ານ ວຽງຄຳ ເພັດລັງສີ ເຈົ້າເມືອງຊຽງຮ່ອນ ຜູ້ທີ່ມີຈິດໃຈເອື້ອເຟື້ອເຜື່ອແຜ່ ເປັນນັກພັດທະນາຜູ້ທີ່ຈູບຈ້າວຫ້າວຫັນ ທັງອາຍຸອານາມພຽງແຕ່ 40 ປີປາຍ ໄດ້ເລົ່າສູ່ຟັງວ່າ: ໃນເວລາທີ່ຊຽງຮ່ອນ-ຊຽງລົມຖືກມອບຫມາຍໃຫ້ເປັນເຂດພິເສດສະໄຫມນັ້ນ, ທ່ານ ສຸກັນ ມະຫາລາດ ເຊິ່ງປັດຈຸບັນກໍ່ໄດ້ເລື່ອນຕຳແຫນ່ງເປັນ ເຈົ້າແຂວງໆ ບໍ່ແກ້ວ ເຄີຍໄດ້ນຳພາບຸກເບີກ ແລະ ປັບປຸງຄຸນນະພາບຊີວິດຂອງຊາວບ້ານເຂດນີ້ມາກ່ອນ ເບື້ອງຕົ້ນຄິດວ່າຈະສ້າງຝາຍກັນນ້ຳ ແລ້ວຂຸດຮ່ອງຊົນລະປະທານຜ່ານເນີນດິນທີ່ພວກເຮົາເອົາເປັນເມືອງນີ້ ເພື່ອເຮັດການກະສິກຳຂອງຊາວບ້ານໃຫ້ພໍຢູ່ພໍກິນເພາະວ່າເນື້ອທີ່ມີປະມານຮ້ອຍກວ່າເຮັກຕາ, ແຕ່ເມື່ອເຮົາຂະຫຍາຍດິນນາ ຊ້ຳພັດບໍ່ມີບ່ອນຂະຫຍາຍປະຊາກອນຄືວ່າ ບ່ອນຈະສ້າງເມືອງບໍ່ມີ. ຈຶ່ງໄດ້ເລີກລົ້ມແນວຄິດເດີມຫັນມາປັບປຸງແລະວາງແຜນສ້າງຕົວເມືອງໃຫມ່ ຈັດເອົາພະນັກງານອອກມາຢູ່ກ່ອນ ປຸກໂຮງຮຽນດັດແປງເສັ້ນທາງ ແລະ ມອບດິນມອບປ່າໃຫ້ຜູ້ມີຈຸດປະສົງຈະອອກມາຕັ້ງບ້ານເຮືອນໃສ່ ໂດຍສະເພາະແມ່ນ ທ່ານເຈົ້າເມືອງເອງເປັນແບບຢ່າງ.

ຂ້າພະເຈົ້າກໍ່ມີໂອກາດໄປຢ້ຽມຢາມ ແລະ ສະເຫນີວຽກງານເວລາທີ່ຫນ່ວຍສຳຫລວດຂຶ້ນບັນຊີຫນັງສືຜູກໃບລານ ແລະ ພະນັກງານວັດທະນະທຳເມືອງ ຮອດເຮືອນຊານບ້ານຢູ່ຂອງທ່ານ, ເຊິ່ງຢູ່ຕໍ່ຫນ້າໂຮງຮຽນມັດທະຍົມສົມບູນຊຽງຮ່ອນນັ້ນເອງ.

ອ່ານຕໍ່ໜ້າ 20

# ໃຂສຳນວນພາສາລາວບູຮານ
# "ຊຸບຢູ່ໃນດິນ ສິນຢູ່ໃນນໍ້າ"

ໂດຍ : ອ່ອນສີ ປະຊາວົງ

ຍັງມີຄອບຄົວຜົວເມຍຄູ່ນຶ່ງ ເປັນຜົວເມຍທີ່ພ້ອມພຽງຮຽງໜ້າເປັນຄູ່ສ້າງຄູ່ສາດຸໝັ່ນຂະຫຍັນພຽນເອົາໃຈໃສ່ຕໍ່ໜ້າທີ່ວຽກງານ. ເຂົາຜ່າກັນສືບກັນສ່າວດິນດອນຕອນຫຍ້າ ເຮັດໃຫ້ເຂົາໄດ້ມີໄຮ່ຜືນໜານາມີນາທົ່ງກວ້າງມີຮົ້ວມີສວນ. ຢູ່ໃນຮົ້ວສວນເຕັມແຕ່ຜືນລະປູກລູກໄມ້ນາໆຊະນິດ. ແຂກມາແຕ່ທາງໄກ ໄທມາແຕ່ບ່ອນອື່ນ, ໃຜເຫັນຮົ້ວສວນລວນປ່ານຂອງຄອບຄົວນີ້ແລ້ວ ແມ່ນມີຄວາມ ຊົມຊື່ນຍິນດີ, ເມື່ອເວົ້າເຖິງໄຮ່ນາຕາກ້າ ແນມເບິ່ງກໍເຂົ້າກໍ່ຮວງດົກກົກໜາ. ເວົ້າສະເພາະຄອບຄົວນີ້ ບໍ່ພຽງແຕ່ລ້ຽງທ້ອງລ້ຽງປາກສະເພາະຄອບຄົວຕົນເອງເທົ່ານັ້ນ ເຂົາຍັງມີນໍ້າໃຈເອື້ອເຟື້ອເພື່ອແຜ່ແກ່ຄອບຄົວຜູ້ທຸກຍາກຂາດເຂີນ. ຈາກສະພາບເສດຖະກິດຊີວິດການເປັນຢູ່ຂອງເຂົາດີຂື້ນ ລື່ນບ້ານລື່ນເມືອງ ເຮັດໃຫ້ເຂົາໄດ້ກາຍເປັນຄອບຄົວນຶ່ງ ທີ່ຖືກຊາວບ້ານຊາວເມືອງຍ້ອງຍໍສັນລະເສີນ ນັບໜ້າຖືຕາ. ຢູ່ຕໍ່ມາໄດ້ຫລາຍຟ້າຫລາຍປີ ຄວາມເຖົ້າກໍ່ເລີຍມາແວ່ ຄວາມແກ່ກໍ່ເລີຍມາຢາມ ເຮັດໃຫ້ສອງຜົວເມຍເຈັບປ່ວຍ ລົ້ມຫາໝອນນອນຄາເສື່ອ ກ່ອນສອງຜົວເມຍຈະຂຸຫ່ວງຕາຍ ໄປພວກເຂົາຈຶ່ງເອີ້ນລູກຊາຍທັງສອງຄົນມາຫາ ແລະ ສັ່ງຄວາມນຳລູກໄວ້ວ່າ : "ຊຸບຢູ່ໃນດິນ ສິນຢູ່ໃນນໍ້າ" ຫລັງຈາກນັ້ນ ອາການຂອງພໍ່ກໍ່ນັບມື້ນັບໜັກໜ້າຂຶ້ນ ໃນທີ່ສຸດພໍ່ກໍ່ເລີຍເສຍຊີວິດໄປ. ຢູ່ຕໍ່ມາ 7 ວັນ ຜູ້ເປັນແມ່ກໍ່ໄດ້ເສຍຊີວິດໄປອີກ. ການມ້ຽນຄາບສິ່ງສະການກໍ່ໄດ້ສຳເລັດລຸລ່ວງໄປດ້ວຍດີ. ສອງອ້າຍນ້ອງຈຶ່ງໄດ້ເປີກສາຫາລືກັນ ກ່ຽວກັບຄຳສັ່ງທີ່ວ່າ "ຊຸບຢູ່ໃນດິນ ສິນຢູ່ໃນນໍ້າ", ສອງອ້າຍນ້ອງເຂົ້າໃຈວ່າ ເງິນທອງມູນມັງສັງຂະຫຍາພໍ່ແມ່ຕ້ອງໄປຝັງໄວ້ທີ່ດິນ ກໍ່ເລີຍພາກັນໄປຂຸດໄປກົ່ນຢູ່ຕາມດິນຮົ້ວດິນສວນ ຈົນວ່າແຫລກວ່າແຫລວ ແຕ່ກໍ່ບໍ່ພົບພໍ້ໄຫເງິນໄຫຄຳຈັກໄຫເລີຍ.

ຫລັງຈາກຊອກຂຸດເງິນທອງໃນດິນບໍ່ພໍ້ແລ້ວ ເຂົາຈຶ່ງພາກັນລົງມຸດນໍ້າ ເພື່ອຊອກຫາສິນທີ່ຢູ່ໃນນໍ້າ ເຂົາພາກັນມຸດນໍ້າຈົນວ່າໜ້າດຳຕາແດງ ກໍ່ບໍ່ພົບບໍ່ພໍ້ສິນຈັກວ່າສິນເປັນໂຕແນວໃດ. ພວກເຂົາພາກັນມຸດນໍ້າໄປອີກ ກໍ່ເລີຍໄປພໍ້ພະລືສີທີ່ນັ່ງຢູ່ໃນຖໍ້າ ເຂົາທັງສອງຈຶ່ງໄປໄຫວ້ສາ ທາງພະລືສີຈຶ່ງຖາມເຂົາວ່າ: ມີຈຸດປະສົງແນວໃດ ຈຶ່ງພາກັນມາເຖິງສະຖານທີ່ແຫ່ງນີ້ ? ຊາຍທັງສອງຈຶ່ງໄດ້ ເລົ່າສູ່ພະລືສີຟັງວ່າ ກ່ອນພໍ່ແມ່ຂ້ານ້ອຍຈະເສຍຊີວິດອິນຊີໄປ ເພິ່ນໄດ້ສັ່ງຄວາມໄວ້ວ່າ "ຊຸບຢູ່ໃນດິນ ສິນຢູ່ໃນນໍ້າ" ພວກຂ້ານ້ອຍຈຶ່ງພາກັນຂຸດກັນກົ່ນ ຊອກຫາໄຫເງິນໄຫຄຳ ຢູ່ດິນຮົ້ວດິນສວນ ແຕ່ກໍ່ບໍ່ພົບເຫັນມັນເລີຍ. ພວກຂ້ານ້ອຍເມື່ອຍຊອກເມື່ອຍຫາແລ້ວຈຶ່ງພາກັນສືບຕໍ່ມຸດນໍ້າ ເພື່ອຊອກຫາສິນທີ່ຢູ່ໃນນໍ້າ ຢາກຮູ້ຢາກເຫັນສິນວ່າໂຕກໍ່າ ຫລື ໂຕແດງ ເມື່ອພະລືສີໄດ້ຟັງຄົບຖ້ວນແລ້ວ ຈຶ່ງໄດ້ອະທິບາຍໃຫ້ສອງອ້າຍນ້ອງຮູ້ ຄຳວ່າ: "ຊຸບຢູ່ໃນດິນ ສິນຢູ່ໃນນໍ້າ" ນັ້ນ ໝາຍຄວາມວ່າໃຫ້ພວກຫລານພາກັນສ້າງກັນສາປູກຝັງຜືນລະປູກລູກໄມ້ນາໆຊະນິດໃສ່ໃນຮົ້ວສວນ ໃນເມື່ອມັນເກີດດອກອອກໝາກແລ້ວໃຫ້ເກັບສັບພະສິ່ງເຄື່ອງປູກຂອງຝັງໄປຂາຍ ນັ້ນແມ່ນຊຸບຢູ່ໃນດິນ.

ຄຳວ່າ "ສິນຢູ່ໃນນໍ້າ" ໝາຍຄວາມວ່າ ຂໍ້ວັດປະຕິບັດຕ່າງໆ ສຳລັບເຝິກທາງກາຍ, ທາງວາ ຈາໃຫ້ຮຽບຮ້ອຍຄວາມປະພຶດທີ່ດີງາມ ໃຫ້ຝັງເລິກຢູ່ໃນນໍ້າຈິດນໍ້າໃຈ. ຫລັງຈາກພະລືສີໄດ້ອະທິບາຍໃຫ້ສອງອ້າຍນ້ອງເຂົ້າໃຈແຈ່ມແຈ້ງແລ້ວ ເຂົາຈຶ່ງພາກັນຂາບລາກັບບ້ານ ແລ້ວພາກັນສ້າງກັນສາ ແລະ ເປັນຄົນຊື່ສັດມີສິນມີທຳປະຈຳໃຈ ປະຕິບັດຕາມຄຳບອກເລົ່າຂອງພະລືສີທຸກປະການ.



ໜອງເປັດແມ່ນຍອດຂອງນໍ້າຊຶມທີ່ບໍ່ເຄີຍແຫ້ງ

# ຊຽງຮ່ອນ - ຊຽງລົມ

ໂດຍ: ໄພວົງ ທົງສັກສິດ

ຊຽງຮ່ອນ - ຊຽງລົມ ເປັນດິນແດນທີ່ເກົ່າແກ່ອີກແຫ່ງນຶ່ງ ທີ່ມີປະຫວັດຄວາມເປັນມາຍາວນານເກືອບຫ້າຮ້ອຍປີ ສະແດງອອກໃນຫີນສີລາຈາລຶກຂອງວັດພະທາດສາສດາຣາມ ບ້ານທາດ ເພິ່ນຂຽນໄວ້ວ່າ " ສ້າງວິຫານ ຈ.ສ 865 " ຊຶ່ງເປັນເວລາ 496 ປີຜ່ານມາ.

ຊຽງຮ່ອນກໍ່ເປັນເມືອງນຶ່ງທີ່ມີຫນັງສືຜູກໃບລານ ຫຼາຍສົມຄວນ ຂຽນເປັນຕົວອັກສອນລື້ ແລະ ລ້ານນາ. ຊົນເຜົ່າທີ່ອາໄສຢູ່ແມ່ນລື້ ແລະ ຍວນ ນັບຖືສາສນາພຸດເປັນສ່ວນຫຼາຍມີຮີດຄອງປະເພນີ ອັນຈົບງາມເຊັ່ນ: ການນຸ່ງ ກື, ການຕ່ຳຫູກ, ເຂັນຝ້າຍ, ການອັບລື້ ຈ້ອຍຍວນ ຊຶ່ງເປັນ ເອກະລັກຂອງເຜົ່າດັ່ງກ່າວ. ຫນັງສືຜູກໃບລານທີ່ເຫັນມີຫຼາຍ ໃນເຂດຊຽງຮ່ອນແມ່ນຢູ່ ວັດສຸວັນນະບົວຄຳ ບ້ານຄ້ຳ, ວັດກຸລະກະດາຣາມ ບ້ານຂຶ້ງ, ວັດທີບປະຣະດາຣາມ ບ້ານປິ່ງ, ວັດສີມຸນມັນທາຣາມບ້ານວ້າຍ. ສະພາບຂອງຫນັງສືໃບລານແມ່ນຍັງດີ. ເພິ່ນເກັບມ້ຽນໄວ້ໃນຕູ້ໄມ້ ແລະ ຫໍໄຕພາຍໃນວັດເຊັ່ນ: ວັດກຸລະກະດາຣາມບ້ານຂຶ້ງ ວັດສີມູນມັນທາຣາມບ້ານວ້າຍ ເປັນຫໍໄຕເສົາດຽວທີ່ເຮັດດ້ວຍໄມ້.

ເລີ່ມແຕ່ວັນທີ 6 ມີນາ 1999 ຫນ່ວຍສຳຫລວດໄດ້ເດີນທາງຈາກໄຊຍະບູລີ ໄປຮອດເມືອງຊຽງຮ່ອນວັນທີ 8/3/99 ແລະ ໄດ້ໄຂພິທີໂອ້ລົມການສຳຫລວດຢ່າງເປັນທາງການທີ່ວັດບ້ານຄ້ຳ ໂດຍທ່ານ ບຸນເລີດ ທຳມະຈັກ ຮອງຫົວໜ້າໂຄງການເຂົ້າຮ່ວມ ເປັນກຽດໃນພິທີມີ ທ່ານ ວຽງຄຳ ເຜັດລັງສີ ເຈົ້າເມືອງງຊຽງຮ່ອນ, ທ່ານ ບຸນຍັງ ຫົວໜ້າຫ້ອງການກະແຫລງຂ່າວ-ວັດທະນະທຳເມືອງ ພ້ອມດ້ວຍນາຍບ້ານ ທັງພໍ່ແມ່ເຖົ້າແກ່ແນວໂຮມ ພາຍໃນສອງບ້ານເຂົ້າຮ່ວມຢ່າງພ້ອມພຽງ. ໃນນັ້ນ ພະອາຈານ ມົງຄຸນ ປະທານ ອ.ພ.ສ.ເມືອງຊຽງຮ່ອນ ແລະ ພະອາຈານ ອຸດົມ ເຈົ້າອະທິການວັດ ວັດບ້ານຄ້ຳ ກໍ່ໄດ້ເຂົ້າຮ່ວມເຊັ່ນດຽວກັນ. ຫລັງຈາກພິທີໂອ້ລົມແລ້ວ ໄດ້ທຳການອະນາໄມ ແລະ ຂຶ້ນບັນຊີຫນັງສືຜູກໃບລານ. ເມື່ອໜ່ວຍສຳຫລວດເຄື່ອນໄປເຮັດວຽກຢູ່ທີ່ ວັດກຸລະກະດາຣາມ ບ້ານຂຶ້ງ, ທ່ານ ສາສດາຈານ



ພະທາດເກົ່າແກ່ ຢູ່ວັດສາສດາຣາມ ບ້ານທາດ



ຫໍໄຕເສົາດຽວ ຢູ່ວັດບ້ານວ້າຍ



ຫີນສີລາຈາລຶກຢູ່ວັດ ພະທາດສາສດາຣາມ ບ້ານທາດ (ຈ.ສ. 865)



ໜັງສືພັບສາທີ່ສົມບູນແບບ ມີໄມ້ປະກັບໜີບ ຢູ່ວັດທົບປະຂະດາຣາມ( ບ້ານປົ່ງ) ຊຽງຮ່ອນ



ສາສດາຈານ ດຣ. ຮະຣັບ ຮຸນດົອຊ ໂອ້ລົມກັບປະຊາຊົນ ເມືອງ ຊຽງຮ່ອນ



ຊາວບ້ານງສ້ຳ ແລະ ບ້ານຍິ່ງ ກຳລັງອະນາໄມໃບລານ



ພິທີບາສີນາງສັງຂານຢູ່ເມືອງຊຽງຮ່ອນ ປີ 1999

ດຣ ຮະຣັບ ຮຸນດົອຊ ຊ່ຽວຊານກິຕິມະສັກຈາກ ສ.ສ. ເຢຍຣະມັນ ກໍ່ໄດ້ເດີນທາງໄປຢ້ຽມຢາມໃນວັນທີ 23 ມີນາ 1999, ນັບວ່າ ເປັນນິມິດໝາຍອັນດີ ທີ່ຫນ່ວຍສຳຫລວດ ແລະ ຊາວບ້ານໄດ້ຕ້ອນຮັບຊ່ຽວຊານປະຈຳໂຄງການ. ເພິ່ນໄດ້ຢ້ຽມຢາມສຸກທຸກຂອງຫນ່ວຍສຳຫລວດພວກເຮົາເປັນເວລາສອງວັນ. ໃນໂອກາດດັ່ງກ່າວ ທາງຫ້ອງການກະແຫຼງຂ່າວ ແລະ ວັດທະນະທຳເມືອງ ກໍ່ໄດ້ເຕົ້າໂຮມປະຊາຊົນສອງຫມູ່ບ້ານ ຄື: ບ້ານຄ້ຳ ແລະ ບ້ານຍິ່ງເຂົ້າຟັງຄຳໂອ້ລົມ ຂອງທ່ານ ສາສ ດາຈານ ດຣ. ຮະຣັບ ຮຸນດົອຊ ແລະ ຄຳໂອ້ລົມຂອງທ່ານ ວຽງຄຳ ເພັດລັງສີ ເຈົ້າເມືອງ. ທັງສອງກໍ່ໄດ້ຍົກໃຫ້ເຫັນຄວາມໝາຍ ຄວາມສຳຄັນຂອງຫນັງສືຜູກໃບລານລາວ ຊຶ່ງແມ່ນພູມປັນຍາຂອງບັນພະບູລຸດລາວໄດ້ສະສົມ ແລະ ບັນຈຸໄວ້ໃນຄຳພີໃບລານນີ້ຫມົດ ເພື່ອໃຫ້ລູກຫຼານໄດ້ສຶກສາຮ່ຳຮຽນສືບຕໍ່ໄປ.

ຈາກນັ້ນ ຊາວບ້ານທັງສອງບ້ານມີຄວາມພາກພູມໃຈເປັນຢ່າງຍິ່ງ ແລະ ໄດ້ຈັດພິທີສູບລາບາສີເພື່ອຕ້ອນຮັບຕາມປະເພນີທີ່ມີໄທຕ່າງດ້າວທ້າວຕ່າງເມືອ ງມາຢ້ຽມຢາມບ້ານເມືອງຂອງພວກເຂົາເຈົ້າ ຜ່ານມາບໍ່ເຄີຍມີຈັກເທື່ອ ຜູ້ເຖົ້າຜູ້ແກ່ ເວົ້າອອກມາສຳນຽງສຽງດຽວກັນວ່າ: ເຮົາເກີດມາຈົນອາຍຸປູນນີ້ແລ້ວກໍ່ບໍ່ທັນແຂກຕ່າງປະເທດມາຢ້ຽມຢາມຊັກເທື່ ! ເພິ່ນອູ້ພາສາລາວສື້ ແລະ ຍອມໄດ້ດີປີ້ກາ ! ອູ້ກັນໄປມາກໍ່ເຂົ້າໃຈກັນ. ພວກເຮົາແສນດີໃຈແຕ້ໆ. ໂຄງການໃບລານເປັນໂຄງການດີແຕ້ໆເຮັດແຕ້ທຳຈິງ. ພວກເຮົາບໍ່ທັນແນວນີ້ຊັກເທື່ !" ຄຳເວົ້າຂອງຊາວບ້ານອ້າງເທິງນັ້ນ ແມ່ນສະແດງອອກເຖິງຄວາມເຊື່ອໝັ້ນ ແລະ ສັດທາຕໍ່ໂຄງການໃບລານລາວ.

ຜ່ານການສຳຫລວດ ແລະ ຂຶ້ນບັນຊີຫນັງສືຜູກໃບລານໃນທົ່ວເມືອງຊຽງຮ່ອນ12 ວັດ ມີຫນັງສືຜູກໃບລານທັງໝົດ 10.428 ຜູກ ແລະ ພັບສາ 359 ເຫລັ້ມ, ໃຊ້ເວລາໃນການສຳຫລວດ 45 ວັນ ນັບວ່າເມືອງຊຽງຮ່ອນເປັນເມືອງທີ່ມີຫນັງ ສືຫລາຍສົມຄວນ.

# ກອງປະຊຸມ ຢູ່ແຂວງ ຫົວພັນ

ໃນວັນທີ 27/4/98 ກອງປະຊຸມສຳມະນາດ້ານວິຊາການປົກປັກຮັກສາຫນັງສືຜູກໃບລານກໍ່ໄດ້ເປີດຂຶ້ນອີກ ທີ່ດິນແດນອັນເປັນມູນເຊື້ອ ເປັນກຸານທີ່ຫມັ້ນ ເປັນໃຈກາງຂອງການປະຕິວັດຊາດປະຊາທິປະໄຕ ເມືອງທີ່ເຕັມໄປດ້ວຍທຳມະຊາດພູຜາອັນງົດງາມນາມກະເດື່ອງນັ້ນກໍ່ຄື : ເມືອງຊຳເຫນືອ ແຂວງຫົວພັນ. ກອງປະຊຸມມີຜູ້ແທນຈາກກະຊວງຖະແຫລງຂ່າວ - ວັດທະນະທຳ ທ່ານ ບົວລຽນ ສີຄັນໄຊ , ທ່ານ ຄຳເສັງ ສູນດາລາ ພ້ອມດ້ວຍຄະນະໂຄງການໃບລານລາວກໍ່ໃຫ້ກຽດເຂົ້າຮ່ວມ ແລະ ພາກສ່ວນພະແນກການອ້ອມຂ້າງແຂວງ ທ່ານຜູ້ແທນທີ່ມາຈາກເມືອງຕ່າງໆ ຈຳ ນວນ 50 ທ່ານ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ. ໃນພິທີ ທ່ານ ເຈີ ຍົງວ່າງ ຄະນະກຳມະການສູນກາງພັກເລຂາພັກແຂວງເຈົ້າແຂວງຫົວພັນ ເປັນປະທານກອງປະຊຸມໄດ້ກ່າວ ເປີດພິທີຢ່າງເປັນທາງການມີບາງຕອນ ທ່ານກ່າວວ່າ :

" ຢູ່ໃນແຜນພັດທະນາກໍ່ໄດ້ກຳນົດແຈ້ງວ່າ ການພັດທະນາເສດຖະ ກິດຕ້ອງໄປຄຽງຄູ່ກັບການພັດທະນາດ້ານວັດທະນະທຳສັງຄົມເພື່ອແນໃສ່ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່ານັບມື້ດີຂຶ້ນ ທາງດ້ານວັດຖຸ ແລະ ຈິດໃຈ. ກອງປະຊຸມມື້ນີ້ເປັນການປະຕິບັດຖືກຕ້ອງຕາມແຜນພັດທະນາເສດຖະກິດສັງຄົມຂອງສູນກາງວາງອອກ ທັງເປັນການຕອບສະໜອງຄວາມມຸ່ງມາດປາດຖະຫນາຂອງປະຊາຊົນບັນດາເຜົ່າແຂວງຫົວພັນທີ່ຄອງຄອຍມາແຕ່ດົນນານ ໂອກາດນີ້ໃນນາມສ່ວນຕົວ ຂ້າພະເຈົ້າຂໍຕີລາຄາສູງຕໍ່ການເອົາໃຈໃສ່ຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ຄະນະຮັບຜິດຊອບໂຄງການ ປົກປັກຮັກສາໃບລານລາວ ແລະ ຊ່ຽວຊານ ສ.ສເຢຍຣະມັນທີ່ມີຄວາມຕັດສິນໃຈຈັດຕັ້ງກອງປະຊຸມສຳມະນາຄັ້ງນີ້ຂຶ້ນ ຂໍສະແດງຄວາມສຳນາຄາຣະວະ ແລະ ຄຳຍ້ອງຍໍຢ່າງມາກຸານຂ່າວອີງການ ພ.ສ.ລ ຂັ້ນແຂວງ, ຂັ້ນເມືອງ ແລະ ບັນດາທ່ານຜູ້ແທນທຸກພາກສ່ວນທີ່ເສັຽສະລະເວລາເຂົ້າຮ່ວມກອງປະຊຸມຄັ້ງນີ້ຢ່າງພ້ອມພຽງ.

ຄືພວກເຮົາຊາບນຳກັນແລ້ວວ່າ ແຂວງຫົວພັນໄດ້ກຳເນີດເກີດຂຶ້ນມາຊ້ານານແລ້ວ ປະຊາຊົນທີ່ເຄີຍດຳ ລົງຊີວິດຢູ່ບົນຜືນແຜ່ນດິນແຫ່ງນີ້ ລ້ວນແຕ່ມີປະເພນີຂະນົບທຳ ນຽມອັນດີງາມມາແຕ່ບູຮານະການ ສ່ວນຫລາຍແມ່ນຖື



ທ່ານ ເຈີ ຍົງວ່າງ
ຄະນະກຳມະການສູນກາງພັກ
ເລຂາພັກແຂວງ
ເຈົ້າແຂວງຫົວພັນ

ບັນຍາກາດໃນກອງປະຊຸມ





ຜູ້ແທນຊົມເຄື່ອງວາງສະແດງ



ທິວທັດໃນຕົວເມືອງ

ສາສນາພຸດ ເຊິ່ງເມື່ອກ່ອນເກືອບເວົ້າໄດ້ວ່າ 100% ຂອງຈໍານວນປະຊາຊົນ. ບັນດາບ້ານຊາວພຸດມີວັດວາອາຣາມ ແລະ ມີຫນັງສືຜູກໃບລານ ເປັນຫນັງສືເທດ ເປັນພະທັມຄໍາພີບີທານຕ່າງໆທີ່ບໍ່ຕໍ່າກວ່າ 10 ຫົວເລື່ອງໃນແຕ່ລະວັດ, ພະສົງໄດ້ເຄີຍນໍາໃຊ້ເຜີຍແຜ່ໃຫ້ແກ່ອອກຕົນຍາດໂຍມຊາວບ້ານ. ແຕ່ແຂວງຫົວພັນກໍ່ຖືກສົງຄາມທໍາລາຍ ຫລາຍຄັ້ງຫລາຍທົບ, ວັດວາອາຣາມສ່ວນຫລາຍຖືກທໍາລາຍ ພະທໍາຄໍາພີຕ່າງໆກໍ່ຖືກທໍາລາຍເສັຽຫາຍໄປນໍາ. ພາຍຫລັງສັນຕິພາບກັບຕາວຄືນມາໂດຍສະເພາະ 4-5 ປີມານີ້ປະຊາຊົນຊາວພຸດແຕ່ລະບ້ານ ກໍ່ໄດ້ອອກແຮງແຂ່ງຂັນກັນກໍ່ສ້າງປະຕິສັງຂອນວັດວາອາຣາມຄືນມາໃຫມ່, ໃນນັ້ນ ຫນັງສືຜູກໃບລານທີ່ຍັງເຫລືອຄ້າງຢູ່ນໍາວັດ ອອກຕົນຍາດໂຍມເຖົ້າແກ່ແນວໂຮມຮັກສາໄວ້ກໍ່ຍັງຫລາຍສົມຄວນ, ແຕ່ຫາກວ່າຍັງບໍ່ໄດ້ສໍາຫລວດເກັບກໍາລະອຽດເທື່ອ, ດັ່ງນັ້ນຂ້າພະເຈົ້າຂໍສະເຫນີນໍາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ວ່າ: ຈະເຮັດແນວໃດຈິ່ງຈະສຶກສາອົບຮົມປຸກລະດົມຊວນເຊື່ອໃຫ້ປະຊາຊົນທຸກຄົນເຫັນໄດ້ຄຸນປະໂຫຍດ ແລະ ຄວາມສໍາຄັນຂອງຫນັງສືຜູກໃບລານພະທໍາຄໍາພີຕ່າງໆ ເພາະອັນນັ້ນເປັນມູນມໍລະດົກວັດທະນະທໍາທີ່ບັນພະບູລຸດໄດ້ຂີດ-ຂຽນໄວ້ໃຫ້, ຂ້າພະເຈົ້າເຊື່ອວ່າ ດ້ວຍຄວາມເອົາໃຈໃສ່ ຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ ກໍ່ຄືພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍທ່ານຜູ້ແທນທີ່ຢູ່ທີ່ນີ້ ຈະຮັບຫມາກຮັບຜົນຂອງກອງປະຊຸມຄັ້ງນີ້ຢ່າງຈົບງາມ".

ໃນວາລະກອງປະຊຸມນັ້ນດາຜູ້ແທນແຕ່ລະເມືອງກໍ່ໄດ້ອອກຄວາມຄິດຄວາມເຫັນສະແດງຄວາມເປັນຫ່ວງເປັນໃຍຕໍ່ສະພາບຫນັງສືໃບລານ ທີ່ຜ່ານມາມີການຕົກເຮັ່ຽເສັຽຫາຍທັງພະພຸດທະຮູບ ແລະ ຫນັງສືທໍາ ແຕ່ລະທ່ານຕ່າງກໍ່ຕີລາຄາສູງຕໍ່ການນໍາຂອງພັກ ແລະ ລັດ ທີ່ຍາມໃດກໍ່ເອົາໃຈໃສ່ຕໍ່ມູນມໍລະດົກວັດທະນະທໍາຂອງຊາດສະເຫມີ. ກອງປະຊຸມດໍາເນີນມາຮອດ ວັນທີ 29/4/98 ຈິ່ງໄດ້ປິດລົງຢ່າງຈົບງາມ ທ່າມກາງຄວາມປິຕິຍິນດີຂອງທ່ານຜູ້ແທນ ແລະ ພະສົງອົງຄະເຈົ້າຊາວແຂວງຫົວພັນ. ດັ່ງນັ້ນ ມື້ສຸດທ້າຍເພິ່ນຈຶ່ງຈັດໃຫ້ມີການບາສີສູ່ຂວັນຢູ່ວັດໂພໄຊໂດຍມີມວນຊົນເຂົ້າຮ່ວມຢ່າງຫລວງຫລາຍ.

ຊາວຫົວພັນຖືວ່າກອງປະຊຸມເທື່ອນີ້ມັນໄດ້ຢືນຢັນອີກເທື່ອນຶ່ງເຖິງນະໂຍບາຍຂອງພັກລັດຖະບານທີ່ຈະຟື້ນຟູມູນມໍລະດົກວັດທະນະທໍາໃນເຂດນີ້ ໃຫ້ຮຸ່ງເຮືອງຄືນມາອີກເທື່ອໃຫມ່ໂດຍຖືເອົານໍ້າໃຈຂອງປະຊາຊົນຊາວຫົວພັນທີ່ມີມູນເຊື້ອວັດທະນະທໍາມາແຕ່ບູຮານແລ້ວນັ້ນ ເປັນບ່ອນອີງໃຫ້ແກ່ການຟື້ນຟູໃຫ້ສົມກັບ ຊື່ງາມນາມກະເດື່ອງ ເມືອງວິລະຊົນ ຄົນອົງອາດ ທໍາມະຊາດແດນຟ້າ ນາງອາຫານ, ຊື່ນບານດ້ວຍຮອຍຍິ້ມ. ❢

# ຄຳເຫັນ ຂອງ *ທ່ານ ແພງສີ ສຸກຈະເລີນ*

*ຫົວໜ້າຜະແນກຖະແຫລງຂ່າວ ແລະວັດທະນະທຳແຂວງຫົວພັນ*

ເວົ້າເຖິງຂະບວນການປະຕິວັດຂອງໜັງສືຜູກໃບລານຢູ່ແຂວງຫົວພັນ, ຕາມຂໍ້ມູນເອກະສານປະຫວັດສາດຂອງແຂວງຫົວພັນໃຫ້ຮູ້ວ່າ : ນັບແຕ່ມື້ມີຄົນເຂົ້າມາຕັ້ງຖິ່ນຖານບ້ານເຮືອນຢູ່ປິຕຸພູມແຫ່ງນີ້ ກໍ່ໄດ້ນຳເອົາຮີດຄອງປະເພນີວິຖີຊີວິດຂອງຕົນເຂົ້າມານຳ, ສະເພາະສາສນາພຸດ ແລະໜັງສືຜູກໃບລານໄດ້ເຂົ້າມາແຂວງຫົວພັນກ່ອນນີ້ປະມານ 400 ກວ່າປີ ລະຫວ່າງປີ ພ.ສ 2100 ແລະ 2200, ສາດສະນາພຸດຂະຫຍາຍຕົວແຮງສົມຄວນ ສະແດງອອກໃນການສ້າງວັດວາອາຮາມພະທາດເຈດີ, ສ້າງພະພຸດທະຮູບ,ຈາກນັ້ນກໍ່ຂະຫຍາຍຕົວສືບໆກັນມາເກືອບວ່າທຸກບ້ານຂອງຊາວພຸດໄດ້ມີວັດວາ, ມີພະສົງສຳມະເນນ, ມີໜັງສືໃບລານເຊິ່ງເປັນພະທຳຄຳພີໃຫ້ການຮ່ຳຮຽນຂຽນອ່ານ; ດັ່ງນັ້ນຜູ້ທີ່ມີຄວາມຮູ້, ມີຄຸນນະທຳມີອະລິຍະທຳ ສ່ວນຫລາຍແມ່ນໄດ້ຜ່ານການຮ່ຳຮຽນຂຽນອ່ານຈາກໜັງສືໃບລານຢູ່ນຳວັດນຳວາ.

ແຕ່ເນື່ອງຈາກວ່າ ຜ່ານໄລຍະສົງຄາມ ແລະ ຜ່ານຈາກເສັ້ນຄົນນີ້ ສູ່ເສັ້ນຄົນໃໝ່ສືບເນື່ອງມາຍາວນານ ໜັງສືຜູກໃບລານກໍ່ໄດ້ຕົກເຮັ່ຣເສັຽຫາຍຢ່າງຫລວງຫລາຍ.

ເຖິງປັດຈຸບັນນີ້ ຕາມການປະເມີນຜົນເບື້ອງຕົ້ນໜັງສືຜູກໃບລານຢູ່ແຂວງຫົວພັນ ມີປະມານ 6-7 ພັນຜູກ. ແຕ່ຫາກວ່າໜັງສືເຫລົ່ານັ້ນ ສ່ວນຫລາຍບໍ່ໄດ້ຮວມສູນນຳວັດນຳວາ ເຫດຜົນກໍ່ຍ້ອນວ່າ ວັດວາເປ່ເພບໍ່ທັນປະຕິສັງຂອນ



ທ່ານແພງສີ ມອບຄອງຂວັນໃຫ້ແກ່ຫົວໜ້າໂຄງການ
ເນື່ອງໃນໂອກາດຈັດກອງປະຊຸມ

ຫລື ບາງບ້ານສ້າງຂຶ້ນແລ້ວກໍ່ບໍ່ມີພະເນນຈະປົກປັກຮັກສາ, ບາງສ່ວນກໍ່ຢາຍຢູ່ນຳເຖົ້າແກ່ອາວຸໂສ, ການປົກປັກຮັກສາບໍ່ທັນໄດ້ເອົາໃຈໃສ່ ອັ້ນຫຍຸ້ງຍາກອີກອັນນຶ່ງຫາຜູ້ຮູ້ໜັງສືທຳຢູ່ບ້ານກໍ່ຍາກສົມຄວນ, ຄົນສະໄໝປັດຈຸບັນບໍ່ທັນເຫັນຄຸນປະໂຫຍດ ແລະ ຄວາມສຳຄັນຂອງໜັງສືຜູກໃບລານ.

ດັ່ງນັ້ນ ຂ້າພະເຈົ້າຂໍສະເໜີບາງຈຸດໃຈ ວິທີການປົກປັກຮັກສາ ແລະ ເສີມຂະຫຍາຍອັນຕົ້ນດັ່ງນີ້. ໃຫ້ແຕ່ລະເມືອງສືບຕໍ່ເກັບກຳຂຶ້ນບັນຊີຕື່ມອີກ. ເພື່ອໃຫ້ຮູ້ລະອຽດວ່າໜັງ ສືຜູກໃບລານໃນເມືອງຂອງຕົນມີຢູ່ໃນວັດໃດແດ່, ຈຳນວນຫລາຍໜ້ອຍເທົ່າໃດ, ຢູ່ນຳອອກຕົນຍາດໂຍມເທົ່າໃດ ເອົາບັນຊີສົ່ງໃຫ້ເພື່ອສະເໜີຂຶ້ນແຜນການສຳຫລວດ ອໍທຶນຮອນປົກປັກຮັກສາຕໍ່ໄປ, ໃນບ່ອນທີ່ມີໜັງສືຜູກໃບລານຫລາຍແຕ່ຄວາມສາມາດໃນການຈັດຕັ້ງວັດຂຶ້ນບໍ່ມີແລ້ວ ແລະການຮັກສາຂອງຄົນໃນບ້ານກໍ່ບໍ່ມີພໍເທົ່າໃດ, ຄວນຂຶ້ນແຜນລະອຽດສົມທົບກັບທ້ອງຖິ່ນ, ສັບຊ້ອນເຄື່ອນຍ້າຍມາເຕົ້າໂຮມຢູ່ບ່ອນໃດ - ນຶ່ງ ມອບໝາຍໃຫ້ມີຜູ້ຮັກສາ ສະເໜີໃຫ້ແຕ່ລະເມືອງໂດຍສະເພາະເຖົ້າແກ່ແນວໂຮມ, ພ.ສ.ລ ແຕ່ລະເມືອງ ແລະ ອົງການຈັດຕັ້ງທຸກພາກສ່ວນເອົາໃຈໃສ່ດ້ານການໂຄສະນາສຶກສາອົບຮົມ ໃຫ້ຄົນຮູ້ທົ່ວໄປໂດຍສະເພາະຊາວໜຸ່ມໄວໜຸ່ມໃຫ້ເຫັນໄດ້ຄຸນຄ່າຂອງໜັງສືຜູກໃບລານ.

ໃນໂອກາດນີ້ຂໍສະເໜີທາງໂຄງການເລີຍ ຄວນພິມຂ່າວໃບລານໃຫ້ຫລາຍຕື່ມ ເພື່ອແຈກຢາຍໃຫ້ກວ້າງຂວາງ, ສະເໜີໃຫ້ມີການລົງສຳຫລວດຕົວຈິງຢູ່ແຂວງຫົວພັນ ເປັນບາງຈຸດທີ່ເຫັນວ່າຈຳ ເປັນ. ໃນເມືອງນຶ່ງອາດເອົາ 1-2 ວັດໂດຍເອົາໜັງສືຜູກບ່ອນມີໜ້ອຍມາໂຮມກັນ, ໃນປັດຈຸບັນນີ້ກໍ່ມີອອກຕົນຍາດໂຍມ ເຖົ້າແກ່ແນວໂຮມຫລາຍບ້ານສະເໜີຂໍຕັ້ງວັດວາອາຮາມ ແລະ ປະຕິສັງຂອນຄືນໃໝ່ ຕໍ່ບັນຫານີ້ ດ້ວຍທຶນຂອງລັດນັ້ນກໍ່ບໍ່ພຽງພໍ ອາດຊ່ວຍໄດ້ຮ່ວງໃດ-ນຶ່ງ ແຕ່ສຳຄັນແມ່ນສັດທາ ຂອງອອກຕົນຍາດ-ໂຍມນັ້ນເອງ ເປັນຜູ້ເຕົ້າໂຮມ ແລະ ຟື້ນຟູອັນສຳຄັນນີ້ໄດ້.

## ຜະຫຍາຍ່ອຍ

*(ບາງຕອນຄັດຈາກປຶ້ມຜະຫຍາຍ່ອຍຂອງໂຄງການປົກປັກຮັກສາໜັງສືໃບລານລາວ)*
*ຮຽບຮຽງໂດຍ ມະຫາບຸນຍົກ ແສນສູນທອນ*

- *ກ້ຽງປາກໄຫ*    *ທາງໃນເປັນປາແດກ*
  *ກ້ຽງປາກບັ້ງ*    *ຂ້າງຂີ້ປາກກະທໍ*

- *ຢ່າໄດ້ຕີໂຫດທ້ອງ*    *ປອງໝູ່ໝູໝາ*
  *ມັນບໍ່ເຫັນຂອງກິນ*    *ບໍ່ແລ່ນວົນວຽນອ້ອມ*
  *ຕີແຕ່ແມງວັນຮ້າຍ*    *ຕອມໃຕຢູ່ໃພ່ງ*
  *ໃຕຫາກເໜັນອູ້ງ*    *ຊິຕີໄດ້ຮ່ອມໃດ*

- *ຕີແຕ່ຄວາຍປັກເລຮ້າຍ*    *ປັກຕູສອນບໍ່ອັດຮີ*
  *ຕີແຕ່ແມງມີ້ຮ້າຍ*    *ຕີນສິ້ນບໍ່ຮ່ຳເພີງ*

- *ຕີແຕ່ເປັດໄກ່ດີ້*    *ເຕັ້ນຕອດຕຳຂາ*
  *ມັນຫາກເຫັນຂອງກິນ*    *ຈຶ່ງແລ່ນວົນວຽນອ້ອມ*
  *ຕີແຕ່ງົວຄວາຍໝົ້ນ*    *ຮຽວໜານຮົ້ວໄຮ່*
  *ມັນຫາກເຫັນບ່ອນໄດ້*    *ຈຶ່ງຫຽວໝົ້ນຢູ່ດົນ*

- *ຕີແຕ່ຄົນເຂົາຮ້າຍ*    *ພາຍໃຕບໍ່ເຖື້ອງຕໍ່*
  *ຕີແຕ່ຄໍອີ່ງເພີ້ງ*    *ຄຳເຈົ້າຜັດແທ່ງຈົບ*

- *ຢ່າໄດ້ເສຍແຮງເດ້*    *ເປັນຄົນບຳເພີນ*
  *ຄົນໃຫ້ຄົນຮອດກົ້ນ*    *ໜຽວຕຸ້ຍຈັ່ງແມ່ນຄົນ.*

---

## ມັງຄະລະສູດແປ : ເປັນຄຳກອນລາວ

ຕໍ່ຈາກສະບັບທີ 17

ຫລັກສູດແຫ່ງຄວາມຈະເຣີນ ນິຖຼ ປະການ *( ໂດຍ ຈັນທ໌ ອິນທຸພິລາສ )*

14. ທຳພຣົມເຜົາບາບບ້າ,    ປະພຶດເພດພຣຽມພຣົມ
    ອະຣິຍະສັດເຫັນ-    ແຈ່ມໃຈຈິງແຈ້ງ,
    ໃຈເຫັນຮູ້    ໃນນິພານແຜ້ວຜ່ອງ;
    ສີ່ນີ້ ມັງຄະເລດລ້ຳ    ລືແລ້ວວ່າ ອຸດົມ.

ຜຸຕຖັສສະ ໂລກະທັມເມຫິ ຈະ ຈິຕຕັງ ຍັສສະ ນະ ກັມປະຕິ
ອະໂສກັງ ວິຣະຊັງ ເຂມັງ ເອຕັມມັງຄະລະມຸຕຕະມັງ.

15. ຍາມເມື່ອກຶກຕ່ອຍຕ້ອງ-    ໂດຍໂລກທັມມາ,
    ໃຜຜູ້ ຈິດຫອນເວ-    ຫວັ່ນໄຫວ, ວາຍເສົ້າ,
    ກິເລສາທຸລີແລ້ງ,    ດວງໃຈກະເສີມຍິ່ງ;
    ສີ່ນີ້ ທັມທ່ຽງແທ້    ມຸງຄຸນລ້ວນເຫລົ່າອຸດົມ.

ເອຕາທິສານິ ກັຕວານະ ສັພພັຕຖະມະປະຣາຊິຕາ
ສັພພັຕຖະ ໂສດຖິງ ຄັຈສັນຕິ ຕັນເຕສັງ ມັງຄະລະມຸຕຕະມັນຕິ

16. ມວນມະນຸດເທບພ້ອມ    ເພັງພ່ຳມຸງຄຸນ ກ້ອນແລ້ວ
    ທຽນຍ່ອມ ຫລີງແລເຫັນ-    ແຕ່ອຸດົມຕາຄຸ້ມ
    ສີສວັດແລ້ວ    ປະມວນມາມີໂຊກ
    ພັຍຜ່ານພົ້ນ    ກະເສີມສູ້ຊູສະການ
ແທ້ແລ້ວ.

ອະວະສານ )

# ຫລານສອນຍ່າ

(ຕໍ່ຈາກສະບັບທີ 17)

*ຟັງສີໃບລານສົມເດັດສຸບັນ*
*ວັດປະຊານີຍົມ ບ້ານນາກຸງເໜືອ*

ໂດຍ : ບຸນເລີດ ທຳມະຈັກ

* ບັດນີ້ ຫລານຂໍຈາເຖິງເຖົ້າ
ຫລານຊິບອກໃຫ້ຮູ້
ຟັງເຍີ ຝູງຄົນເຖົ້າ
ຢ່າຟ້າວຕິຕື່ນຫ້ວງ
* ເພິ່ນວ່າ ແນວຄົນເຖົ້າ
ເອົາຊິແຫນງໜ່າຍໜ້າ
ແນວວ່າເປັນຄົນເຖົ້າ
ລູກຫລານຈຶ່ງຊິຢ້ານ
* ເພິ່ນວ່າ ເປັນຜູ້ເຖົ້າ
ຈັ່ງຊິສົມຊົງຄຸນ
ໃຜຜູ້ເປັນຄົນເຖົ້າ
ຫວນຮູ້ທັມພະເຈົ້າ
* ຄັນວ່າ ເພິ່ນຮຽກໃຊ້
ຄັນແມ່ນ ເພິ່ນບອກດີ
ຫລານຊິຍໍມືໄຫວ້
ຄືອານົບເຖຣະເຈົ້າ
* ຊື່ວ່າ ແນວຄົນນີ້
ແສນຊິຍາກຊິຫຍຸ້ງ
ຄັນແມ່ນເຖິງຍາມຄ່ຳ
ເຖິງຍາມແລງ
ເຮັດຕາມຄອງຮີດບ້ານ
* ຢ່າສຸໄລລາແກ້ວ
ທຳມະຊາດເລີດລ້ຳ

ບູຮານສອນສັ່ງ ກ່ອນເນີ !
ຄຳພະເຈົ້າສັ່ງສອນ
ລອງຟັງຄຳຫລານກ່າວ
ວ່າຫລານຫລ້າກ່າວຫາ
ບໍ່ຕາມຄອງມັນບໍ່ຄ່ອງ
ຈາຕ້ານກ່າວຂວັນ
ໃຫ້ທຳຊົງເປັນຜູ້ແກ່ ໂອ້ເນີ !
ຊາວບ້ານຈຶ່ງຊິກົວ ຍ່າເຮີຍ
ໃຫ້ເຂົ້າວັດຟັງທຳ
ຄາແສນສູງຊັ້ນ
ໃຫ້ໃຈດີເວົ້າມ່ວນ
ຫລານຊິຍ້ອງຍອດຄຸນ ຍ່າເຮີຍ
ຫລານຊິບໍ່ພາຍໜີ
ຫລານຊິຫຍັບເຂົ້າໃກ້
ວັນທາທຸກເຊົ້າຄ່ຳ
ຫຽວໄຫວ້ຫນໍ່ພຸດໂທ ພຸ້ນແລ້ວ
ມີສິນທັມມັນຈັ່ງແມ່ນ
ກໍ່ຄວນຕັ້ງແຕ່ທັມ
ໃຫ້ຄິດຮ່ຳຫາຄອງ
ໃຫ້ຄິດປອງຫາຮີດ
ບູຮານເຖົ້າແຕ່ງມາ ຍ່າເຮີຍ
ສາມປະການພະເຈົ້າກ່າວ
ໄລຖີ້ມບໍ່ຮ່ອນຄວນ ຍ່າເຮີຍ !

# ການສຳຫລວດ ຢູ່ ແຂວງຫົວພັນ

ຂຽນ ຄຳສິງ ວົງສະຫວ່າງ

ແຂວງຫົວພັນ ຢູ່ພາກເຫນືອຂອງປະເທດລາວ ເປັນແຂວງນຶ່ງທີ່ມີຊາຍແດນຕິດກັບປະເທດຫວຽດນາມຄື: ແຂວງ ເຊີນລາ, ມົກເຈົາ ແລະ ແທງຮວາ ປະກອບດ້ວຍຫົກເມືອງຄື: ເມືອງຊຳເຫນືອ, ເມືອງຊຽງຄໍ້, ເມືອງວຽງທອງ, ເມືອງວຽງໄຊ, ເມືອງຫົວເມືອງ ແລະ ເມືອງຊຳໃຕ້. ໃນປາງສົງຄາມແຂວງຫົວພັນເປັນການທີ່ຫມັ້ນ ແລະ ເປັນໃຈກາງຂອງການປະຕິວັດຊາດ ປະຊາທິປະໄຕ, ປະຊາຊົນສ່ວນຫລາຍມີອາຊີບເຮັດໄຮ່, ເຮັດນາ, ຕ່ຳຫູກ, ເຂັນຝ້າຍສະເພາະເມືອງຊຳເຫນືອຊຶ່ງເປັນທີ່ຕັ້ງຂອງແຂວງ ປະຊາຊົນສ່ວນຫລາຍກໍ່ມັກຄ້າຂາຍ, ມີຕລາດໃຫຍ່ຂາຍຢູ່ຕລອດມື້. ສິນຄ້າອັນລືຊື່ ແລະເປັນທີ່ປະທັບໃຈແກ່ແຂກຄົນກໍ່ແມ່ນສິ້ນໄຫມ,ແພໄຫມນັບວ່າມີລວດລາຍອັນປານີດ ໃຜໄປເຫັນກໍ່ອົດຊື້ບໍ່ໄດ້.

ໃນລະຫວ່າງທ້າຍເດືອນເມສາປີ 2000 ໜ່ວຍສຳຫລວດໜັງສືຜູກໃບລານ ໄດ້ເດີນທາງໄປແຂວງຫົວພັນເພື່ອທຳການປົກປັກຮັກສາ ແລະ ຂຶ້ນບັນຊີຫນັງສືຜູກໃບລານ ຕາມແຜນການທີ່ໄດ້ຕົກລົງໄວ້ ໃນກອງປະຊຸມເມື່ອປີ 1998 ເລີ່ມຕົ້ນສຳຫລວດຢູ່ວັດໂພໄຊຍະບາຣາມ ຊຶ່ງເປັນວັດເກົ່າແກ່ແຕ່ກໍ່ຖືກສົງຄາມທຳລາຍຫລາຍຄັ້ງມາຮອດ ປີ 1974-1975 ປະຊາຊົນກໍ່ຄືອຳນາດການປົກຄອງ ໄດ້ພ້ອມກັນບູລະນະສ້ອມແປງຄືນໃຫມ່ ມາຮອດປັດຈຸບັນກໍ່ເປັນບ້ານເປົ້າຫມາຍວັດທະນະທຳຂອງແຂວງ, ພະອາຈານທອງພອນ ເຈົ້າອະທິການວັດ ທັງເປັນປະທານ ອ.ພ.ສ. ແຂວງ ເພິ່ນສະແດງຄວາມເປັນຫວ່ງ ໂດຍສະເພາະແມ່ນໜັງສືຜູກໃບລານ ໃນໄລຍະຜ່ານມາ ກໍ່ຄືປາງສົງຄາມ ວັດວາສາສະໜາ ກໍ່ຖືກທຳລາຍຢ່າງຫນັກ ສິ່ງທີ່ເຫລືອຄ້າງກໍ່







| 1 | 2 |
| --- | --- |
| 3 | |

1- ສິມວັດບ້ານກົ້າ

2- ກອງເພນຢູ່ແຂວງຫົວພັນ

3- ຊາວບ້ານກຳລັງຂະນາໃນໃບລານ



ທຳມະຊາດເມືອງຊຳເໜືອ ▲



ຖ້ຳຢູ່ເມືອງວຽງໄຊ ◀

ອະນາໄມໃບລານຢູ່ວັດຊຽງລວງ ▼



ມີບໍ່ຫລາຍ ແຕ່ປະຊາຊົນກໍ່ໄດ້ຮັບໂຮມວັດຖຸບູຮານຈຳນວນນຶ່ງໄວ້ ນັບວ່າມາຮອດມື້ນີ້ ຊາວແຂວງຫົວພັນມີຄວາມຕ້ອງການຢາກຟື້ນຟູວັດວາສາສະໜາ ຮີດຄອງປະເພນີອັນດີງາມຂອງຕົນຄືນ ເພື່ອເຮັດໃຫ້ພະສົງກໍ່ຄືຊາວພຸດທົ່ວໄປມີຄວາມຮູ້ເລື່ອງສືບທຳປະຈຳໃຈ ແຕ່ວ່າຍັງຂາດຜູ້ນຳພາ ຜູ້ມີຄວາມຮູ້ສືບທຳມາສິດສອນ ແຕ່ສ່ວນຫລາຍກໍ່ຍັງມີສັດທາຕໍ່ພຸດທະສາສະໜາໄດ້ດີຕລອດມາ .

ການສຳຫລວດຄັ້ງນີ້ແມ່ນເຮັດໄດ້ 6 ວັດ ໃນສອງເມືອງຄືຊຳເໜືອ ແລະວຽງໄຊ ມີຫນັງສືຜູກໃບລານ 1.658 ຜູກ. ແຕ່ລະບ້ານທີ່ຫນ່ວຍສຳຫລວດ ເຄື່ອນໄປຮອດກໍ່ໄດ້ຮັບການຮ່ວມມື ເປັນຢ່າງດີ ປະຊາຊົນມີຄວາມສົນໃຈຫລາຍ ຕໍ່ກັບວຽກວັດທະນະທຳ ກໍ່ຄືຮີດຄອງປະເພນີ ເຖິງແມ່ນບາງວັດບໍ່ມີພະສົງຢູ່ ເຂົາເຈົ້າກໍ່ຍັງບູລະນະສ້ອມແປງວັດວາໃຫ້ຈົບງາມຢູ່ສະເຫມີ.

## ສຸພາສິດບູຮານ ( ປູ່ສອນຫລານ )

(ຕໍ່ຈາກສະບັບທີ 16 )
( ລານວັດ ບ. ປົ່ງຄົງ ມ. ສະຫວັນນະເຂດ )

ໂດຍ : ບຸນເລີດ ທຳມະຈັກ

* ຕົບຜູ້ຂ້າ ຊື່ວ່າພຸດທະໂຄສາ ອາຈານນັກປາດ
ສະຫລາດເຫັນຄອງ ຫມິ່ນຫມອງພາຍຫນ້າ
ຈຶ່ງໄດ້ກ່າວກາບກ້າ ໄວ້ກ້າສອນຫລານ
ເປັນນິທານບ້ານນອກ ຕ້ານບອກຄຳພີ
ທີຄະນິກາຍ ບອກຫລາຍນິເທດ
ໃນເຂດສິງສານ ຝາກລູກຫລານຈື່ຈຳເອົາໄວ້
ໃຜຈື່ໄດ້ ເມື່ອຫນ້າຍ່ອມຍືນ ຫລານເອີຍ !
ຫລີວແລະຟືນ ຢ່າໄດ້ຂອງນັ່ງ
ເສື້ອບັ່ງຕ່ຳ ຢ່າໄດ້ນັ່ງສູງ
ເສື້ອລຸງຕາ ໃຫ້ຢາງປານແກ້ວ
ປູ່ສອນແລ້ວ ຫລານຫລ້າຈື່ຈຳ
* ທຳເປັນຂຸນ ໃຫ້ມີໃຈກ້ວາງ
ຢ່າອວດອ້າງ ຄຳຮູ້ບໍ່ການ
ຄວາມໃດງາມ ການຂຸນຜູ້ຮູ້
ນັກຫລົ້ນລູ້ ໃຫ້ການດອມເນັຽ
ນັກເປັນເພັຽ ໃຫ້ການພີ່ນ້ອງ
ໃຈໃສ່ສ່ອງ ກັບແລ້ວຈຶ່ງໄປ
ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່ ໄພ່ບໍ່ພ້ອມແປງບ້ານບໍ່ເປັນ

( ອ່ານຕໍ່ສະບັບໜ້າ )

ຊຽງຮ່ອນ-ຫົງສາ......*( ຕໍ່ຈາກໜ້າ 8 )*

ຄະນະສຳຫລວດຂອງໜ່ວຍງານຂໍຊົມເຊີຍ ແລະ ສະແດງຄວາມຮູ້ບຸນຄຸນຕໍ່ ທ່ານ ວຽງຄຳ ເຜັດລັງສີ ເຈົ້າເມືອງງຊຽງຮ່ອນ, ທ່ານ ບຸນຍັງ ຫົວໜ້າວັດທະນະທຳເມືອງ, ທ່ານ ສົມຍົດ ຮອງແນວໂຮມເມືອງ, ເຖົ້າແກ່ອາວຸໂສ, ພະສົງສຳມະເນນ ແລະ ອອກຕົນຍາດໂຍມຊາວເມືອງຊຽງຮ່ອນ- ຊຽງລົມ ທີ່ໄດ້ໃຫ້ການຕ້ອນຮັບ ແລະ ສະໜັບສະໜູນວຽກງານ ນັບແຕ່ຕົ້ນຕະລອດປາຍ ເຊິ່ງພວກເຮົາສຳເລັດວຽກງານການກວດຄົ້ນຂຶ້ນທະບຽນບັນຊີໄດ້ເຖິງ 12 ວັດ, ມີຈຳນວນເອກະສານເຖິງ 10 ພັນປາຍກ່ວາຜູກທີ່ໄດ້ອະນາໄມ ແລະ ມ້ຽນມັດປົກປັກຮັກສາໄວ້ໃສ່ຫີບໃສ່ກັບຮຽບຮ້ອຍແລ້ວ ຫວັງວ່າໂອກາດໜ້າເວລາດີ ທີມງານຈະກັບມາຢ້ຽມຢາມອີກເທື່ອນຶ່ງ ແລະ ຂໍຂອບໃຈມາຍັງອຳນາດການປົກຄອງທັງ 12 ຫມູ່ບ້ານ ເຖົ້າແກ່ຍິງຊາຍທີ່ໄດ້ໃຫ້ຄວາມຮ່ວມມື ແລະ ອຸປະຖຳຄ້ຳຊູວັດວາພຸດທະສາສະໜາ ຊ່ວຍເປັນພາລະໃນການປົກປັກຮັກສາພະທຳຄຳສອນໄວ້ຄູ່ບ້ານຄູ່ເມືອງ, ສືບທອດມູນມໍລະດົກຮອດຊົ່ວລູກຊົ່ວຫລານຈົ່ງປະສົບແຕ່ຄວາມສຸກຄວາມຈະເລີນທຸກທົ່ວໜ້າແດ່ທ້ອນ ❝

ສູ່ແດນເໜືອ.....*( ຕໍ່ຈາກໜ້າ 5 )*

ໃນປາງສົງຄາມເຮັດໃຫ້ເອກະສານໃບລານເສຍຫາຍໄປຈົນໝົດ. ມາຮອດປັດຈຸບັນນີ້ຊາວບ້ານໄດ້ບູລະນະຄືນໃໝ່ແລ້ວ ແຕ່ບໍ່ສົມບູນ ຈຸດພິເສດ ປະຊາຊົນ(ຊາຍ) ທີ່ເປັນໜານ ແລະ ໃໝ (ທິດ ແລະ ຊຽງ) ມີຈຳນວນຫລວງຫລາຍໃນເຂດເມືອງແຫ່ງນີ້, ໂດຍສະເພາະຜູ້ທີ່ຢູ່ໃນອົງການຈັດຕັ້ງຂອງລັດເຊັ່ນ: ເມືອງ ແລະ ຂັ້ນບ້ານລ້ວນແລ້ວແຕ່ໄດ້ຜ່ານການບວດຮຽນທາງສາດສະໜາມາແລ້ວ. ຍ້ອນວ່າ ເອົາເຈົ້າອ່ານໂຕທຳໄດ້ຢ່າງຄ່ອງແຄ້ວ. ນີ້ກໍ່ຍ້ອນບັນພະບູລຸດຂອງພວກເຮົາໄດ້ຂຽນ (ຈານ) ໄວ້ໃນໜັງສືຜູກໃບລານເພື່ອໃຫ້ລູກຫລານສືບຕໍ່ຮ່ຳຮຽນ ແລະ ປົກປັກຮັກສາໄວ້ຊົ່ວການລະນານ ແລະ ຍັງຊ່ວຍໃຫ້ເອົາມີວິຊາ ຄວາມຮູ້ ຄວາມສາມາດອີກດ້ວຍ.


## ເຈົ້າຂອງ

ໂຄງການປົກປັກຮັກສາໜັງສືໃບລານລາວ
(ການຮ່ວມມືລາວ-ເຢຍຣະມັນ)

### *ສຳນັກງານຕັ້ງຢູ່*

ກະຊວງກະແຫລງຂ່າວ ແລະ ວັດທະນະທຳ
ຫໍສະໝຸດແຫ່ງຊາດ
ກຸະມັນເຊດຖາທິຣາດ ( ນ້ຳພຸ)

ຕູ້ປ.ນ. 8818
ໂທ: ( 856-21) 251 405
ແຟັກ: (856-21) 213 029
E-mail : bailane@laotel.com

## ຄະນະຈັດທຳ

| | |
|---|---|
| ທີ່ປຶກສາ | : ດາລາ ກັບລະຍາ |
| | : ບຸນຍົກ ແສນສູນທອນ |
| ຫົວໜ້າ ບ.ກ | : ກົງເດືອນ ເນຕະວົງ |
| ຮອງຫົວໜ້າ ບ.ກ | : ບຸນເລີດ ທຳມະຈັກ |
| ຈັດໜ້າ ຄອມພີວເຕີ | : ສີສຸພັນ ດວງມະນີ |
| ຕີພິມ ຄອມພີວເຕີ | : ບົວສີ ສີປະເສີດ |
| ກ່າຍພາບ | : ຄຳແສງດາວ ປະກົນມະວົງ |
| | : ຄຳສິງ ວົງສະຫວ່າງ |
| | : ໄພວົງ ທົງສັກສິດ |
| | : ຄຳມຸກ ສີລືອາໄພ |